# ທຄຕລ ຮ່ວມເວທີ "ບໍລິສັດຈົດທະບຽນພົບປະຜູ້ລົງທຶນ" ຄັ້ງທີ 1 ປະຈຳປີ 2026




## ໃນຕອນເຊົ້າວັນພຸດ ວັນທີ 20 ພຶດສະພາ 2026

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ໄດ້ເຂົ້າຮ່ວມງານສຳມະນາ ທີ່ ຕະຫຼາດຫຼັກຊັບລາວ ພາຍໃຕ້ຫົວຂໍ້ "ບໍລິສັດຈົດທະບຽນພົບປະຜູ້ລົງທຶນ ຄັ້ງທີ 1 ປະຈຳປີ 2026" ໃນໂອກາດດັ່ງກ່າວ, **ທ່ານ ນາລິນ ສີລະວົງສິດ** ຮອງຜູ້ອຳນວຍການ ທຄຕລ ຂຶ້ນເວທີນຳສະເໜີຜົນງານທຸລະກິດ ປີ 2025 ແລະ ໄຕມາດ 1 ປີ 2026 ໃຫ້ແກ່ນັກລົງທຶນ, ສື່ມວນຊົນ ແລະ ຜູ້ສົນໃຈ ໄດ້ຮັບຟັງ ແລະ ຖາມ-ຕອບຢ່າງກົງໄປກົງມາ!

---




ງານສຳມະນາດັ່ງກ່າວຖືວ່າເປັນສ່ວນໜຶ່ງຂອງກິດຈະກຳ Investor Relations (IR) ທີ່ມຸ່ງສ້າງຄວາມໃກ້ຊິດລະຫວ່າງບໍລິສັດຈົດທະບຽນ ແລະ ຜູ້ລົງທຶນ ພາຍໃຕ້ຕະຫຼາດຫຼັກຊັບລາວ (LSX).

"ງານສຳມະນາໃນຄັ້ງນີ້ ບໍ່ພຽງແຕ່ເປັນເວທີໃຫ້ແກ່ນັກລົງທຶນ ແລະ ສື່ມວນຊົນ ໄດ້ແລກປ່ຽນຂໍ້ມູນ ແລະ ຖາມ-ຕອບຂໍ້ຂ້ອງໃຈ ກ່ຽວກັບການດຳເນີນທຸລະກິດຂອງ ທຄຕລ ແຕ່ຍັງເປັນການສົ່ງເສີມໃຫ້ກິດຈະກຳຊື້-ຂາຍຮຸ້ນ ໃນຕະຫຼາດຫຼັກຊັບລາວ ໃຫ້ມີຄວາມຄຶກຄື້ນ ແລະ ມີສີສັນຫຼາຍຂຶ້ນ."

# BCEL Joined "Listed Companies Meet Investors" Seminar — 1st Session of 2026




## ON THIS MORNING OF WEDNESDAY, 20 MAY 2026

**Banque pour le Commerce Extérieur Lao Public (BCEL)** participated in a seminar at the Lao Securities Exchange (LSX) under the name " Listed Companies Meet with Investors — First Session of 2026" On this occasion, **Mr. Nalin Silavongsith,** Deputy Managing Director of BCEL, took the stage to present the bank's business performance results for the year 2025 and the first quarter for the year 2026 for investors, media, and all interested parties to listen and engage in a direct Q&A session.




This event is part of the Investor Relations (IR) initiative, aimed at strengthening the connection between listed companies and investors within the Lao Securities Exchange (LSX).

"This seminar is not only a platform for investors and media to exchange information and raise questions about BCEL's business operations in a transparent manner — but also a key driver to boost trading activities in the Lao Securities Exchange, making it more vibrant and dynamic."